# ວິໄສທັດ ວຽກງານ ຖວທ ຮອດປີ 2020

**1.ວຽກງານຖະແຫຼງຂ່າວ:**

ພັດທະນາສື່ມວນຊົນລາວໃຫ້ກ້າວສູ່ຄຸນນະພາບ, ທັນສະໄໝ, ວ່ອງໄວ-ທັນເຫດການ, ເປັນກະບອກສຽງອັນແຫຼມຄົມຂອງພັກ-ລັດ ທັງລວງເລິກ ແລະ ລວງກ້ວາງ, ເຂັ້ມແຂງ ແລະ ທັນໄປສູ່ກຸ້ມຕົນເອງເທື່ອລະກ້າວ. ພົວພັນເຊື່ອມໂຍງໄດ້ກັບເວທີສື່ມວນຊົນສາກົນ, ຮັບປະກັນຄວາມປອດໄພ ແລະ ສະຖຽນລະພາບທາງດ້ານຂໍ້ມູນຂ່າວສານ, ມີບຸກຄະລາກອນ ທີ່ໄດ້ມາດຕະຖານສື່ມວນຊົນລາວ ສົມຄູ່ກັບຍຸກສະໄໝ.

**1.ວຽກງານວັດທະນະທຳ:**

ສືບຕໍ່ອານຸລັກ, ປົກປັກຮັກສາ, ສືບທອດ, ຟື້ນຟູ ແລະ ເສີມຂະຫຍາຍມູນເຊື້ອ, ຄຸນຄ່າ ມໍລະດົກວັດທະນະ ທຳອັນດີງາມ ຂອງຊາດໃຫ້ມີຄວາມຍືນຍົງ, ພັດທະນາອະລິຍະທຳທາງດ້ານວັດຖຸ ແລະ ຈິດໃຈຂອງສັງຄົມ, ພ້ອມທັງຮັບເອົາຄຸນຄ່າວັດທະນະທຳ ທີ່ກ້າວໜ້າຂອງມວນມະນຸດຢ່າງມີການເລືອກເຟັ້ນ ແລະ ສອດຄ່ອງກັບຍຸກສະໄໝ ສາ ມາດເຊື່ອມໂຍງກັບສາກົນ, ສະກັດກັ້ນສິ່ງຫຍໍ້ທໍ້ທາງດ້ານວັດທະນະທຳທີ່ເປັນໄພຕໍ່ສັງຄົມ. ປັບປຸງ ແລະ ພັດທະນາຜະລິດຕະພັນວັດທະນະທຳ ໃຫ້ມີຄວາມຫຼາກຫຼາຍ ແລະ ມີຄຸນນະພາບສູງ, ປະກອບສ່ວນຢ່າງຕັ້ງໜ້າເຂົ້າໃນການພັດ ທະນາເສດຖະກິດ-ສັງຄົມ ຂອງຊາດຢ່າງຍືນຍົງ.

**1.ວຽກງານທ່ອງທ່ຽວ:**

ພັດທະນາການທ່ອງທ່ຽວລາວ ໃຫ້ມີຄວາມຍືນຍົງຕາມທິດສົ່ງເສີມການທ່ອງທ່ຽວທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ, ເຊື່ອມໂຍງເຂົ້າກັບການທ່ອງທ່ຽວໃນລະດັບພາກພື້ນ ແລະ ສາກົນ, ເຮັດໃຫ້ປະເທດເຮົາກາຍເປັນຈຸດໝາຍປາຍທາງການທ່ອງທ່ຽວ ຂອງນັກທ່ອງທ່ຽວໃນທົ່ວໂລກ, ພັດທະນາ ແລະ ສົ່ງເສີມການທ່ອງທ່ຽວໃຫ້ກາຍເປັນຂະແໜງການເສດຖະກິດນຳໜ້າ, ຊ່ວຍໃຫ້ປະຊາຊົນລຸດພົ້ນ ຈາກຄວາມທຸກຍາກ ຕາມນະໂຍບາຍ ຂອງລັດ ຖະບານ.

**1.ວຽກງານເສນາ:**

ພັດທະນາລະບົບການຄຸ້ມຄອງບໍລິຫານ, ປັບປຸງກົງຈັກການຈັດຕັ້ງ ທັງສູນກາງ ແລະ ທ້ອງຖິ່ນໃຫ້ເຂັ້ມແຂງ, ກະທັດຮັດ ແລະ ທັນສະໄໝ. ສຶກສາຄົ້ນຄວ້າ ວາງແຜນພັດທະນາວຽກງານ ຖວທ ຢ່າງມີວິທະຍາສາດ, ຈັດຕັ້ງປະຕິ ບັດແຜນພັດທະນາ ແລະ ງົບປະມານ ໃຫ້ມີປະສິດທິຜົນໂດຍມີການຕິດຕາມ, ກວດກາ ແລະ ປະເມີນຜົນເປັນລະ ບົບຕໍ່ເນື່ອງ.